ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສະຫະພັນແມ່ຍິງຮາກຖານ ທຫລ ຈັດສຳມະນາໃນຫົວຂໍ້ "ສຸຂະພາບ ແລະ ຄວາມງາມ"




ເນື່ອງໃນໂອກາດວັນແມ່ຍິງສາກົນ 8 ມີນາ ຄົບຮອບ 111 ປີ ຄະນະບໍລິຫານງານສະຫະພັນແມ່ຍິງຮາກຖານ ທຫລ ໄດ້ຈັດຕັ້ງການສຳມະນາໃນຫົວຂໍ້ "ສຸຂະພາບ ແລະ ຄວາມງາມ" ຂຶ້ນໃນຕອນເຊົ້າຂອງວັນທີ 2 ມີນາ 2021 ທີ່ ຫ້ອງປະຊຸມໃຫຍ່ ທຫລ. ໂດຍການເປັນປະທານຂອງທ່ານນາງ ໄພທູນ ກິ່ງແກ້ວ ປະທານຄະນະບໍລິຫານງານສະຫະພັນແມ່ຍິງຮາກຖານ ທຫລ ແລະ ມີຜູ້ເຂົ້າຮ່ວມທີ່ມາຈາກບັນດາສະຫະພັນແມ່ຍິງຮາກຖານ, ໜ່ວຍແມ່ຍິງ ແລະ ຕາງໜ້າຈາກສາມອົງການຈັດຕັ້ງມະຫາຊົນ ທຫລ ເຂົ້າຮ່ວມ 40 ທ່ານ.

ໃນການສຳມະນາຄັ້ງນີ້ ທ່ານນາງ ຄູນດີ ຈັນທະຈັກ ອາດີດຄະນະບໍລິຫານງານສະຫະພັນແມ່ຍິງຮາກຖານ ທຫລ ແລະ ທັງເປັນປະທານມູນນິທິສຸຂະພາບດີ ໄດ້ຍົກໃຫ້ເຫັນເຖິງບັນຫາດ້ານສຸຂະພາບຂອງຄົນເຮົາໃນປັດຈຸບັນ ແລະ ສາເຫດທີ່ເຮັດໃຫ້ສຸຂະພາບຊຸດໂຊມໄວແມ່ນມາຈາກຫຼາຍສາເຫດເປັນຕົ້ນ: ການກິນອາຫານບໍ່ຖືກຫຼັກໂພສະນາການ, ພັກຜ່ອນບໍ່ພຽງພໍ, ບໍ່ອອກກຳລັງກາຍ, ມີສະພາບຈິດໃຈທີ່ບໍ່ດີ ແລະ ອື່ນໆ ຊຶ່ງເປັນຕົ້ນເຫດພາໃຫ້ເກີດອາການເຈັບປ່ວຍ ແລະ ນຳໄປສູ່ພະຍາດຮ້າຍແຮງຕ່າງໆເຊັ່ນ: ພະຍາດມະເຮັງ, ພະຍາດເບົາຫວານ, ພະຍາດຄວາມດັນເລືອດສູງ ແລະ ອື່ນໆ ສົ່ງຜົນໃຫ້ຄົນເຈັບເຫຼົ່ານີ້ຕ້ອງໃຊ້ເງິນໃນການປິ່ນປົວ. ດັ່ງນັ້ນ, ທ່ານຈຶ່ງໄດ້ຮຽກຮ້ອງໃຫ້ທຸກຄົນເບິ່ງແຍງຮັກສາສຸຂະພາບຂອງຕົນເອງ ເພື່ອເຮັດໃຫ້ຄົນເຮົາມີຊີວິດທີ່ຍືນຍາວ.

ໃນການສຳມະນາຄັ້ງນີ້, ຜູ້ເຂົ້າຮ່ວມໄດ້ມີການແລກປ່ຽນຄຳຄິດເຫັນ ແລະ ສອບຖາມກ່ຽວກັບບັນຫາສຸຂະພາບຢ່າງເປັນຂະບວນຟົດຟື້ນ ແລະ ນຳເອົາຄວາມຮູ້ທີ່ໄດ້ຈາກການສຳມະນາໃນຄັ້ງນີ້ໄປໝູນໃຊ້ໃນຊີວິດຕົວຈິງຂອງຕົນໃນຕໍ່ໜ້າ.





# ຂ່າວ-ພາບ: ນ. ວັນປະເສີດ ສົມບູນຂັນ.